ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

PA

- ກົມ / ຖ web

10/4 2015

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 80 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 08 APR 2015

# ແຈ້ງການ

**ເຖິງ**: ບັນດາທ່ານ ຫົວໜ້າກົມ-ທຽບເທົ່າ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳແຕ່ລະພາກ.

**ເລື່ອງ**: ເອົາໃຈໃສ່ກວດກາຄວາມຖືກຕ້ອງຕໍ່ກັບການແຕ່ງກາຍຂອງພະນັກງານກົມກອງຕົນ.

- ອີງຕາມຂໍ້ຕົກລົງກ່ຽວກັບເງິນອຸດໜູນແຮງງານ ແລະ ນະໂຍບາຍຕໍ່ພະນັກງານ ທຫລ ສະບັບເລກທີ 87/ທຫລ ລົງວັນທີ 16/3/1999;

- ອີງຕາມແຈ້ງການຂອງກົມຈັດຕັ້ງແລະພະນັກງານ ສະບັບເລກທີ 77/ກຈພ ລົງວັນທີ 19/04/2010 ແລະ ສະບັບເລກທີ 151/ກຈພ ລົງວັນທີ 19/05/2011;

- ອີງຕາມຂໍ້ຕົກລົງວ່າດ້ວຍການປະຕິບັດນະໂຍບາຍເງິນຕັດເຄື່ອງແບບໃຫ້ພະນັກງານ ທຫລ ສະບັບເລກທີ 261/ທຫລ ລົງວັນທີ 06/04/2015.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະຜ່ານມາພະນັກງານ ທຫລ ໂດຍລວມແມ່ນປະຕິບັດລະບຽບການນຸ່ງຖືໄດ້ດີພໍສົມຄວນ, ແຕ່ກໍ່ຍັງມີພະນັກຈຳນວນໜຶ່ງບໍ່ທັນເປັນເຈົ້າການຢ່າງແທ້ຈິງ ໃນການປະຕິບັດລະບຽບການນຸ່ງຖືດັ່ງກ່າວ ຊຶ່ງສະແດງອອກ ຄື: ພະນັກງານເພດຊາຍ ຍັງນຸ່ງຖືທີ່ບໍ່ເປັນລະບຽບຮຽບຮ້ອຍ (ບໍ່ໃສ່ກາລະວັດ, ນຸ່ງໂສ້ງບໍ່ມີກີບ, ແອວລອຍ, ຂາລີບ ແລະ ປາຍເກີບແຫຼມຈົນເກີນໄປ); ພະນັກງານເພດຍິງ: ໃສ່ເສື້ອແຂນຍົກ, ສິ້ນແອວລອຍ, ສິ້ນສີແຈ້ງເກີນໄປ, ຕີນສິ້ນໃຫຍ່ເກີນກຳນົດ, ໃສ່ເກີບຫຼາກຫຼາຍສີສັນ ແລະ ຍ້ອມສີຜົມ.

ເພື່ອເຮັດໃຫ້ການແຕ່ງກາຍ ຂອງພະນັກງານທະນາຄານແຫ່ງ ສປປ ລາວ ມີຄວາມເປັນລະບຽບຮຽບຮ້ອຍ, ຖືກຕ້ອງຕາມຮູບແບບ ແລະ ສີຂອງເຄື່ອງແບບທີ່ກຳນົດໄວ້ໃນແຈ້ງການ ສະບັບເລກທີ 77/ກຈພ ລົງວັນທີ 19/04/2010 ແລະ ສະບັບເລກທີ 151/ກຈພ ລົງວັນທີ 19/05/2011, ຈຶ່ງແຈ້ງມາຍັງທ່ານ ເປັນເຈົ້າການໃນການກວດກາຄວາມຖືກຕ້ອງ ແລະ ແນະນຳໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຈັດຕັ້ງປະຕິບັດລະບຽບການໃຫ້ເຂັ້ມງວດກວ່າເກົ່າ, ລາຍລະອຽດດັ່ງນີ້:

1. ເພດຊາຍ: ໃສ່ເສື້ອຄໍເຊີດແຂນຍາວ, ສີຂາວ ແລະ ສີຟ້າອ່ອນ, ໂສ້ງສີຟ້າກົມ-ສີດຳ ຮູບຊົງແບບສຸພາບ ແລະ ມີກີບ, ປາຍຂອງຂາໂສ້ງບໍ່ນ້ອຍ ຫຼື ໃຫຍ່ຈົນເກີນໄປ (ລະຫວ່າງ 21-25 ຊມ), ເກີບສີດຳ ຫຼື ສີນ້ຳຕານ ເຂັ້ມ, ປາຍຂອງເກີບບໍ່ຍາວ ຫຼື ແຫຼມຈົນເກີນໄປ ແລະ ໃສ່ກາລະວັດ.

2. ເພດຍິງ: ໃສ່ເສື້ອຄໍເຊີດ ຫຼື ຄໍຮາວາຍ, ແຂນຍາວ ຫຼື ແຂນສີ່ສ່ວນ, ສີໄຂ່ອ່ອນ ແລະ ສີຟ້າອ່ອນ; ສິ້ນແດງຊ້ຳ ແລະ ສີກົມມະທາດ, ຕີນສິ້ນບໍ່ໃຫຍ່ ຫຼື ນ້ອຍຈົນເກີນໄປ (ລະຫວ່າງ 10-15 ຊມ), ບໍ່ເປັນແອວລອຍ, ບໍ່ມີຈຸດດອກ ແລະ ບໍ່ເຂັບ ຫຼື ລ່າມເກີນໄປ; ເກີບສີດຳ ຫຼື ສີນ້ຳຕານເຂັ້ມ (ແບບຄັດຊູ, ຮັດສົ້ນ ແລະ ຊັ່ງດານ), ສົ້ນເກີບບໍ່ໃຫ້ສູງເກີນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນເຈົ້າການປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຄັ່ງຄັດ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຈັດຕັ້ງແລະພະນັກງານ

ບຸນຕາ ດາຣາວົງ